# ລຳປາເມືອງລາວ

ໂອດວງຈຳປາ ເວລາຊົມນ້ອງ
ນຶກເຫັນພັນຊ່ອງ ມອງເຫັນຫົວໃຈ
ເຮົານຶກຂຶ້ນໄດ້ ໃນກິ່ນເຈົ້າຫອມ
ເຫັນສວນດອກໄມ້ ບິດາປູກໄວ້ຕັ້ງແຕ່ບານມາ
ເວລາຫງ່ອມເຫງົາ ເຈົ້າຊ່ວຍບັນເທົາ ເຮົາຫາຍໂສກາ
ເຈົ້າດວງຈຳປາ ຄູ່ຄຽງເຮົາມາ ແຕ່ຍາມນ້ອຍເອີຍ

ກິ່ນເຈົ້າສຳຄັນ ຕິດພັນຫົວໃຈ
ເປັນຫນ້າຮັກໃຄ່ ແພງໄວ້ເຊີຍຊົມ
ຍາມເຫງົາເຮົາດົມ ໂອຈຳປາຫອມ
ເມື່ອດົມກິ່ນເຈົ້າ ປານພົບຊູ້ເກົ່າທີ່ພາກຈາກໄປ
ເຈົ້າເປັນດອກໄມ້ ທີ່ງາມວິໄລ ຕັ້ງແຕ່ໃດມາ
ເຈົ້າດວງຈຳປາ ມາລາຂວັນຮັກ ຂອງຮຽມນີ້ເອີຍ

ໂອດວງຈຳປາ ພູພ້າເມືອງລາວ
ງາມດັ່ງດວງດາວ ຊາວລາວເພິ່ງໃຈ
ເກີດຢູ່ພາຍໃນ ແດນດິນລ້ານຊ້າງ
ຖ້າໄດ້ພັດພາກ ເນລາເທດຈາກບ້ານເກີດເມືອງນອນ
ຮຽມຈະເອົາເຈົ້າ ເປັນເພື່ອນຮ່ວມເຫງົາ ເທົ່າສິ້ນຊີວາ
ເຈົ້າດວງຈຳປາ ມາລາງາມຍິ່ງມິ່ງເມືອງລາວເອີຍ